ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 20 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 2 3 JUN 2021

# ຂໍ້ຕົກລົງ
# ວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 59/ສຄຄຊ, ລົງວັນທີ 7 ມິຖຸນາ 2021.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວການອອກຈຳໜ່າຍຮຸ້ນກູ້ ເພື່ອລະດົມທຶນຂອງບໍລິສັດຢູ່ ສປປ ລາວ ແນໃສ່ເຮັດໃຫ້ການເຄື່ອນໄຫວດັ່ງກ່າວ ມີຄວາມຮັບປະກັນ, ເປັນລະບຽບຮຽບຮ້ອຍ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

**ມາດຕາ 2 (ປັບປຸງ) ການອອກຈຳໜ່າຍຮຸ້ນກູ້**

ການອອກຈຳໜ່າຍຮຸ້ນກູ້ ແມ່ນການເອົາຮຸ້ນກູ້ຂອງບໍລິສັດ ອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນ ເພື່ອເປົ້າໝາຍໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ເຄື່ອນໄຫວ ຫຼື ຂະຫຍາຍ ທຸລະກິດ;
2. ຊຳລະຄືນໜີ້ສິນເງິນກູ້;
3. ຊຳລະຄືນຮຸ້ນກູ້ທີ່ໄດ້ອອກຈຳໜ່າຍຜ່ານມາ;
4. ເປົ້າໝາຍອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້** ໝາຍເຖິງ ບໍລິສັດມະຫາຊົນ, ບໍລິສັດຈົດທະບຽນ ແລະ ບໍລິສັດຈຳກັດ ຍົກເວັ້ນບໍລິສັດຈຳກັດຜູ້ດຽວ.

2. **ບໍລິສັດອອກຈຳໜ່າຍຮຸ້ນກູ້** ໝາຍເຖິງ ບໍລິສັດ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການນຳເອົາຮຸ້ນກູ້ຂອງຕົນອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນ;

3. **ບໍລິສັດກວດສອບ** ໝາຍເຖິງ ບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອໃຫ້ບໍລິການກວດສອບ ໃນຂົງເຂດວຽກງານຫຼັກຊັບ;

4. **ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື** ໝາຍເຖິງ ບໍລິສັດທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ໃນຂົງເຂດວຽກງານຫຼັກຊັບ;

5. **ທີ່ປຶກສາດ້ານການເງິນ** ໝາຍເຖິງ ບໍລິສັດຫຼັກຊັບທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ເຮັດໜ້າທີ່ເປັນ ທີ່ປຶກສາດ້ານການເງິນໃນຂົງເຂດວຽກງານຫຼັກຊັບ;

6. **ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້** ໝາຍເຖິງ ບໍລິສັດຫຼັກຊັບ ຫຼື ທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ເຮັດໜ້າທີ່ເປັນ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້;

7. **ຜູ້ຄ້ຳປະກັນການຊຳລະໜີ້** ໝາຍເຖິງ ທະນາຄານທຸລະກິດພາຍໃນ ສປປ ລາວ ຫຼື ອົງການຈັດຕັ້ງສາກົນ;

8. **ຕົວແທນຜູ້ຖືຮຸ້ນກູ້** ໝາຍເຖິງ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ຫຼື ທະນາຄານທຸລະກິດ, ບໍລິສັດຫຼັກຊັບ ຕ່າງປະເທດ ທີ່ໃຫ້ບໍລິການເປັນຜູ້ຕາງໜ້າໃຫ້ແກ່ຜູ້ຖືຮຸ້ນກູ້ ແລະ ເປັນຜູ້ໃຫ້ບໍລິການແກ່ຜູ້ອອກຈຳໜ່າຍຮຸ້ນກູ້ ເພື່ອຕິດຕາມການເຄື່ອນໄຫວ ແລະ ການປະຕິບັດສິດ ແລະ ພັນທະຂອງ ຜູ້ອອກຈຳໜ່າຍຮຸ້ນກູ້ ຕໍ່ ຜູ້ຖືຮຸ້ນກູ້ ຕາມທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ຫຼື ເອກະສານອື່ນທີ່ກ່ຽວຂ້ອງ ແລະ ຂອບເຂດສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້;

9. **ຜູ້ປະເມີນມູນຄ່າຊັບສິນ** ໝາຍເຖິງ ບໍລິສັດປະເມີນມູນຄ່າຊັບສິນ ທີ່ໄດ້ຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອໃຫ້ບໍລິການປະເມີນມູນຄ່າຊັບສິນ ໃນຂົງເຂດວຽກງານຫຼັກຊັບ;

10. **ຜູ້ລົງທຶນລາຍໃຫຍ່** ໝາຍເຖິງ ຜູ້ລົງທຶນ ປະເພດ ບຸກຄົນ ແລະ ນິຕິບຸກຄົນ ຊຶ່ງນິຕິບຸກຄົນ ຕ້ອງບໍ່ແມ່ນ ຜູ້ລົງທຶນປະເພດສະຖາບັນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 3 ຂໍ້ 19. ສຳລັບຜູ້ລົງທຶນປະເພດບຸກຄົນ ຕ້ອງທີ່ມີຄວາມຮູ້ ຄວາມສາມາດທາງດ້ານການເງິນ, ມີປະສົບການດ້ານການລົງທຶນ, ມີຊັບສິນທັງໝົດ ບໍ່ຫຼຸດ 5 ຕື້ກີບ ຫຼື ລາຍຮັບທັງໝົດປະຈຳປີ ບໍ່ຫຼຸດ 400.000.000 ກີບ ຫຼື ມູນຄ່າລົງທຶນໃນຫຼັກຊັບ ທັງໝົດ ບໍ່ຫຼຸດ 1 ຕື້ກີບ. ສຳລັບ ຜູ້ລົງທຶນປະເພດນິຕິບຸກຄົນ ມີຊັບສິນສຸດທິ ບໍ່ຫຼຸດ 10 ຕື້ກີບ ຫຼື ມູນຄ່າລົງທຶນໃນຫຼັກຊັບ ທັງໝົດ ບໍ່ຫຼຸດ 2 ຕື້ກີບ;

11. **ຜູ້ມີອຳນາດຄວບຄຸມ** ໝາຍເຖິງ ຜູ້ຖືຮຸ້ນທີ່ມີສິດອອກສຽງ ບໍ່ວ່າທາງກົງ ຫຼື ທາງອ້ອມ ຫຼາຍກວ່າຊາວຫ້າສ່ວນຮ້ອຍ (25%) ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດ ຫຼື ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການຂອງບໍລິສັດ ທີ່ມີສ່ວນກ່ຽວຂ້ອງກັບການກຳນົດນະໂຍບາຍ, ການບໍລິຫານ ຫຼື ການເຄື່ອນໄຫວທຸລະກິດທີ່ສຳຄັນຂອງບໍລິສັດອອກຈຳໜ່າຍຮຸ້ນກູ້;

12. **ໃບຢັ້ງຢືນການຈັດສັນຮຸ້ນກູ້** ໝາຍເຖິງ ເອກະສານທີ່ຢັ້ງຢືນ ປະເພດ, ຈຳນວນ ແລະ ມູນຄ່າ ຮຸ້ນກູ້ ທີ່ອອກຈຳໜ່າຍໃຫ້ແກ້ຜູ້ລົງທຶນ ພາຍຫຼັງສຳເລັດການຈັດສັນຮຸ້ນກູ້.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການຊຳລະໜີ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້, ຜູ້ປະເມີນມູນຄ່າຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການອອກຈຳໜ່າຍຮຸ້ນກູ້ຢູ່ ສປປ ລາວ.

## ໝວດທີ 2
## ຄຸນລັກສະນະ, ໃບຢັ້ງຢືນການຈັດສັນ ແລະ ຮູບແບບການອອກຈຳໜ່າຍ ຮຸ້ນກູ້

**ມາດຕາ 5 ຄຸນລັກສະນະຂອງຮຸ້ນກູ້**

ຮຸ້ນກູ້ ຕ້ອງມີຄຸນລັກສະນະຕົ້ນຕໍ ດັ່ງນີ້:

1. ສາມາດຊື້ ຂາຍ ແລະ ປ່ຽນມືໄດ້;
2. ມີຜົນຕອບແທນ;
3. ມີອາຍຸ 1, 3, 5, 7, 10 ຫຼື 15 ປີ;
4. ເປັນສະກຸນເງິນກີບ ຫຼື ສະກຸນເງິນຕາຕ່າງປະເທດ ຕາມການເຫັນດີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
5. ມູນຄ່າກຳນົດ ໃນໃບຮຸ້ນກູ້ ບໍ່ໃຫ້ຫຼຸດ 100.000 ກີບ.

**ມາດຕາ 6 (ປັບປຸງ) ໃບຢັ້ງຢືນການຈັດສັນຮຸ້ນກູ້**

ໃບຢັ້ງຢືນການຈັດສັນຮຸ້ນກູ້ ຕ້ອງມີຂໍ້ມູນຕົ້ນຕໍ ດັ່ງນີ້:

1. ຊື່ບໍລິສັດອອກຈຳໜ່າຍຮຸ້ນກູ້;
2. ເລກທີໃບທະບຽນວິສາຫະກິດຂອງ ບໍລິສັດອອກຈຳໜ່າຍຮຸ້ນກູ້;
3. ປະເພດຂອງຮຸ້ນກູ້;
4. ອາຍຸ ແລະ ວັນທີ, ເດືອນ, ປີ ຄົບກຳນົດເວລາໄຖ່ຖອນຂອງຮຸ້ນກູ້;
5. ຜົນຕອບແທນ;
6. ຈຳນວນຮຸ້ນກູ້;
7. ມູນຄ່າກຳນົດໃນໃບຮຸ້ນກູ້;
8. ວິທີການ, ກຳນົດເວລາໃນການຊຳລະ ຕົ້ນທຶນ ແລະ ດອກເບ້ຍ;
9. ລາຍເຊັນຂອງ ຜູ້ມີສິດອຳນາດ ແລະ ຕາປະທັບຂອງ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ໃຫ້ແກ່ມວນຊົນ ຫຼື ບໍລິສັດອອກຈຳໜ່າຍຮຸ້ນກູ້ ກໍລະນີ ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ.

**ມາດຕາ 7 (ປັບປຸງ) ຮູບແບບການອອກຈຳໜ່າຍຮຸ້ນກູ້**

ຮູບແບບການອອກຈຳໜ່າຍກູ້ ຕ້ອງປະຕິບັດຕາມການກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 26.

## ໝວດທີ 3
## ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ

**ມາດຕາ 8 ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ແມ່ນການອອກຈຳໜ່າຍຮຸ້ນກູ້ ຄັ້ງທຳອິດ ຫຼື ການອອກເພີ່ມ ທີ່ມີການໂຄສະນາຜ່ານພາຫະນະສື່ມວນຊົນໃນວົງກວ້າງ, ບໍ່ມີການກຳນົດປະເພດ ຫຼື ກຸ່ມຜູ້ລົງທຶນສະເພາະໃດ ໜຶ່ງ.

**ມາດຕາ 9 (ປັບປຸງ) ເງື່ອນໄຂຂອງການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 28. ນອກຈາກນັ້ນ ຍັງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ເປັນບໍລິສັດມະຫາຊົນ ຫຼື ບໍລິສັດຈຳກັດ ຍົກເວັ້ນ ບໍລິສັດຈຳກັດຜູ້ດຽວ;
2. ສ້າງຕັ້ງ ແລະ ເຄື່ອນໄຫວມາແລ້ວ ຢ່າງໜ້ອຍ 3 ປີ ຍົກເວັ້ນກໍລະນີ ບໍລິສັດ ຫາກມີການ ແຍກ, ຄວບ ຫຼື ຫັນ ເປັນບໍລິສັດຮູບແບບໃໝ່ ຈາກ ບໍລິສັດເດີມທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ຢ່າງໜ້ອຍ 3 ປີ;
3. ມີເອກະສານລາຍງານການເງິນ 1 ປີ ຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການ ຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ມີຕົວແທນຜູ້ຖືຮຸ້ນກູ້ ກໍລະນີ ການອອກຈຳໜ່າຍຮຸ້ນກູ້ ມີຫຼັກຊັບຄ້ຳປະກັນ ຫຼື ມີຜູ້ຄ້ຳປະກັນ ການຊຳລະໜີ້;
5. ມີກຳໄລ 1 ປີ ຄືນຫຼັງທີ່ພຽງພໍ ສຳລັບການຊຳລະດອກເບ້ຍຮຸ້ນກູ້ທັງໝົດໃນ 1 ປີ ຕໍ່ໜ້າ;
6. ມີແຜນການຊຳລະ ຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນແຫຼ່ງທຶນສຳລັບການຊຳລະດັ່ງກ່າວ;
7. ມີການຈັດລຳດັບຄວາມໜ້າເຊື່ອຖືຂອງຮຸ້ນກູ້ທີ່ຈະອອກຈຳໜ່າຍ ຢ່າງຕ່ຳ BBB ຂຶ້ນໄປ. ກໍລະນີ ບໍ່ມີການຈັດລຳດັບຄວາມໜ້າເຊື່ອຖື ຫຼື ຜົນການຈັດລຳດັບຄວາມໜ້າເຊື່ອຖືຂອງຮຸ້ນກູ້ ທີ່ຈະອອກຈຳໜ່າຍ ຫາກຕ່ຳກວ່າ BBB ຕ້ອງມີຜູ້ຄ້ຳປະກັນການຊຳລະໜີ້;
8. ສາມາດຊຳລະ ຕົ້ນທຶນ ແລະ ດອກເບ້ຍ ຂອງຮຸ້ນກູ້ ໃນບ້ວງທີ່ອອກຜ່ານມາ ຕາມກຳນົດເວລາໃນ ການຊຳລະ ກໍລະນີ ທີ່ມີການອອກຈຳໜ່າຍຮຸ້ນກູ້ເພີ່ມ;
9. ມີເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 10 (ປັບປຸງ) ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງປະກອບເອກະສານຕາມທີ່ໄດ້ກົດໄວ້ ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 29. ນອກຈາກນັ້ນ ຍັງມີເອກະສານເພີ່ມເຕີມ ດັ່ງນີ້:

1. ສຳເນົາໃບທະບຽນສຳປະທານ ກໍລະນີ ເປັນທຸລະກິດສຳປະທານ;
2. ບັນຊີລາຍຊື່ຜູ້ຖືຮຸ້ນແຕ່ ໜຶ່ງສ່ວນຮ້ອຍ (1%) ຂຶ້ນໄປ;
3. ໃບຢັ້ງຢືນຄວາມພ້ອມການອອກຈຳໜ່າຍຮຸ້ນກູ້ຈາກ ທີ່ປຶກສາດ້ານການເງິນ ແລະ ຜູ້ຄ້ຳປະກັນ ການອອກຈຳໜ່າຍຮຸ້ນກູ້;

4. ບົດລາຍງານການປະເມີນມູນຄ່າຊັບສິນ ໂດຍໄດ້ຮັບການຮັບຮອງຈາກ ຜູ້ປະເມີນມູນຄ່າຊັບສິນ ກໍລະນີ ການອອກຈຳໜ່າຍຮຸ້ນກູ້ມີຫຼັກຊັບຄ້ຳປະກັນ;

5. ເອກະສານລາຍງານການເງິນ 1 ປີ ຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

6. ເອກະສານ ກ່ຽວກັບແຜນການຊຳລະ ຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນແຫຼ່ງທຶນສຳລັບການຊຳລະດັ່ງກ່າວ;

7. ເອກະສານ ກ່ຽວກັບການກຳນົດ ສິດ ແລະ ໜ້າທີ່ຂອງ ຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້;

8. ສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ລະຫວ່າງ ບໍລິສັດອອກຈຳໜ່າຍຮຸ້ນກູ້ ກັບ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້;

9. ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ ກໍລະນີ ການອອກຈຳໜ່າຍຮຸ້ນກູ້ ມີຫຼັກຊັບຄ້ຳປະກັນ ຫຼື ມີຜູ້ຄ້ຳປະກັນການຊຳລະໜີ້;

10. ບົດລາຍງານການຈັດລຳດັບຄວາມໜ້າເຊື່ອຖືຂອງ ຮຸ້ນກູ້ທີ່ຈະອອກຈຳໜ່າຍ ຫຼື ຜູ້ຄ້ຳປະກັນການຊຳລະໜີ້ຈາກ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື;

11. ສັນຍາຄ້ຳປະກັນການຊຳລະໜີ້ຈາກ ຜູ້ຄ້ຳປະກັນການຊຳລະໜີ້ (ຖ້າມີ);

12. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງຮ່ວມກັບ ທີ່ປຶກສາດ້ານການເງິນ ເປັນຜູ້ກະກຽມເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໃນແຕ່ລະຄັ້ງ ຊຶ່ງຕ້ອງຮັບຜິດຊອບຕໍ່ເນື້ອໃນ ແລະ ຂໍ້ມູນ ທີ່ບົ່ງໄວ້ໃນເອກະສານດັ່ງກ່າວ ພ້ອມທັງເກັບຮັກສາເອກະສານປະຕິບັດງານທີ່ກ່ຽວຂ້ອງດັ່ງກ່າວໄວ້ ຢ່າງໜ້ອຍ 10 ປີ.

**ມາດຕາ 11 ເອກະສານລາຍງານການເງິນ**

ເອກະສານລາຍງານການເງິນຂອງ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ປະກອບດ້ວຍ ໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານກະແສເງິນສົດ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ. ເອກະສານລາຍງານການເງິນ ຕ້ອງຜ່ານການກວດສອບຈາກ ບໍລິສັດກວດສອບ.

ກໍລະນີ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຫາກເປັນກຸ່ມບໍລິສັດ ເອກະສານລາຍງານການເງິນນັ້ນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນແບບ ແຍກກິດຈະການ ແລະ ລວມກິດຈະການ.

ເອກະສານລາຍງານການເງິນ 1 ປີ ຄືນຫຼັງ ທີ່ໃຊ້ເຂົ້າໃນການປະກອບເອກະສານການຮ້ອງຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງສ້າງຂຶ້ນຕາມ ມາດຕະຖານການບັນຊີ ແລະ ມາດຕະຖານການລາຍງານດຽວກັນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

ສຳລັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຫາກມີການ ແຍກ, ຄວບ ຫຼື ຫັນເປັນບໍລິສັດມະຫາຊົນ ເອກະສານລາຍງານການເງິນ 1 ປີ ຄືນຫຼັງ ຕ້ອງສ້າງຂຶ້ນໃນຮູບແບບເອກະສານລາຍງານການເງິນສົມມຸດຖານ ພ້ອມນັ້ນ ເອກະສານລາຍງານການເງິນ 1 ປີ ຄືນຫຼັງຂອງບໍລິສັດດັ່ງກ່າວ ກ່ອນມີການແຍກ, ຄວບ ຫຼື ຫັນ ເປັນບໍລິສັດມະຫາຊົນ ຕ້ອງໄດ້ຜ່ານການກວດສອບ.

ກໍລະນີ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍ

ຫຼັງວັນທີ 30 ມິຖຸນາ ຕ້ອງປະກອບມີ ເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ ຂອງປີທີ່ຮ້ອງຂໍອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໂດຍຜ່ານການທົບທວນຈາກ ບໍລິສັດກວດສອບ.

ກໍລະນີ ມີເຫດການສຳຄັນເກີດຂຶ້ນພາຍຫຼັງວັນທ້າຍງວດຂອງ ເອກະສານລາຍງານການເງິນສະບັບຫຼ້າສຸດທີ່ຍື່ນໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງລາຍງານ ກ່ຽວກັບເຫດການດັ່ງກ່າວເພີ່ມເຕີມ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນເວລາ 3 ວັນ ລັດຖະການ ນັບແຕ່ວັນທີ່ມີເຫດການສຳຄັນເກີດຂຶ້ນ ເປັນຕົ້ນໄປ ພ້ອມທັງເປີດເຜີຍໃນໜັງສືຊວນຊື້.

### ມາດຕາ 12 (ປັບປຸງ) ໜັງສືຊວນຊື້

ໜັງສືຊວນຊື້ ສຳລັບການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງປະກອບດ້ວຍເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 16. ນອກຈາກນັ້ນ ຍັງມີເນື້ອໃນເພີ່ມເຕີມດັ່ງນີ້:

1. ຂໍ້ມູນ ກ່ຽວກັບບໍລິສັດ ເປັນຕົ້ນ ປະຫວັດການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດ ແລະ ປັດໄຈຄວາມສ່ຽງ ດ້ານມະຫາພາກ, ຂະແໜງການ, ທຸລະກິດ ແລະ ການອອກຈຳໜ່າຍຮຸ້ນກູ້;
2. ຂໍ້ມູນ ກ່ຽວກັບຊີວະປະຫວັດຫຍໍ້ຂອງ ຄະນະກຳມະການຂອງສະພາບໍລິຫານແຕ່ລະທ່ານ;
3. ຂໍ້ມູນ ກ່ຽວກັບ ຄຸນລັກສະນະຂອງຮຸ້ນກູ້ ລວມທັງ ສະຫຼຸບເນື້ອໃນສຳຄັນທີ່ກຳນົດ ກ່ຽວກັບສິດ ແລະ ໜ້າທີ່ຂອງ ຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້;
4. ຂໍ້ມູນ ກ່ຽວກັບແຫຼ່ງທີ່ມາຂອງເງິນ ເພື່ອຊຳລະຕົ້ນທຶນ ແລະ ດອກເບ້ຍ;
5. ຂໍ້ມູນອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 13 ການຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ

ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ແຕ່ລະຄັ້ງ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ ຕ້ອງເຮັດສັນຍາຄ້ຳປະກັນ ກັບ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້.

ກໍລະນີ ມີຫຼາຍບໍລິສັດຫຼັກຊັບຮ່ວມກັນຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງມອບໃຫ້ ບໍລິສັດຫຼັກຊັບໃດໜຶ່ງ ເປັນຜູ້ຕາງໜ້າເຮັດສັນຍາຄ້ຳປະກັນ ກັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້.

### ມາດຕາ 14 ການຈັດລຳດັບຄວາມໜ້າເຊື່ອຖື

ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງມີການຈັດລຳດັບຄວາມໜ້າເຊື່ອຖື ໂດຍບໍລິສັດຈັດລຳດັບຄວາມໜ້າເຊື່ອ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂໍ້ 7 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 15 ການຄ້ຳປະກັນການຊຳລະໜີ້

ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງມີການຄ້ຳປະກັນການຊຳລະໜີ້ ຈາກ ຜູ້ຄ້ຳປະກັນການຊຳລະໜີ້ ກໍລະນີ ບໍ່ມີການຈັດລຳດັບຄວາມໜ້າເຊື່ອຖື ຫຼື ຜົນການຈັດລຳດັບຄວາມໜ້າເຊື່ອຖືຂອງຮຸ້ນກູ້ ທີ່ຈະອອກຈຳໜ່າຍ ຫາກຕ່ຳກວ່າ BBB.

ກໍລະນີ ມີຫຼາຍຜູ້ຄ້ຳປະກັນການຊຳລະໜີ້ຮ່ວມກັນຄ້ຳປະກັນການຊຳລະໜີ້ ຕ້ອງມອບໃຫ້ຜູ້ຄ້ຳປະກັນຊຳລະໜີ້ໃດໜຶ່ງ ເປັນຜູ້ຕາງໜ້າເຮັດສັນຍາຄ້ຳປະກັນຊຳລະໜີ້ ກັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້.

**ມາດຕາ 16 (ປັບປຸງ) ການພິຈາລະນາການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ການພິຈາລະນາການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໃຫ້ປະຕິບັດຕາມທີ່ກໍານົດໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 33.

**ມາດຕາ 17 ການເປີດເຜີຍຂໍ້ມູນກ່ຽວກັບແຜນການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ພາຍຫຼັງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ແລ້ວ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ ສາມາດເປີດເຜີຍຂໍ້ມູນ ກ່ຽວກັບແຜນການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕາມເນື້ອໃນທີ່ໄດ້ລະບຸໄວ້ໃນເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ ຍົກເວັ້ນ ຂໍ້ມູນ ກ່ຽວກັບມູນຄ່າຮຸ້ນກູ້ທີ່ຈະອອກ, ຜົນຕອບແທນ, ໄລຍະເວລາທີ່ຈະອອກຈໍາໜ່າຍ ຫຼື ຂໍ້ມູນອື່ນທີ່ອາດກະທົບຕໍ່ການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ບໍ່ອະນຸຍາດໃຫ້ເປີດເຜີຍ.

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງລາຍງານ ກ່ຽວກັບແຜນການເປີດເຜີຍຂໍ້ມູນ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຊາບລ່ວງໜ້າຢ່າງໜ້ອຍ 1 ວັນ ລັດຖະການ ກ່ອນວັນເປີດເຜີຍຂໍ້ມູນດັ່ງກ່າວ.

**ມາດຕາ 18 (ປັບປຸງ) ຄ່າບໍລິການການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງເສຍຄ່າບໍລິການໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມີດັ່ງນີ້:

1. ຄ່າຍື່ນສໍານວນຄໍາຮ້ອງຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຈໍານວນ 10.000.000 ກີບ ແລະ ຕ້ອງຊໍາລະພາຍໃນວັນທີ່ໄດ້ຍື່ນສໍານວນ ຄໍາຮ້ອງ ຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ຄ່າອອກໃບອະນຸຍາດການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນໃນແຕ່ລະຄັ້ງ ຈໍານວນ ສູນຈຸດສູນສອງສ່ວນຮ້ອຍ (0,02%) ຂອງມູນຄ່າລວມຂອງຮຸ້ນກູ້ທີ່ອອກຈໍາໜ່າຍ ແຕ່ບໍ່ໃຫ້ຕໍ່າກວ່າ 25.000.000 ກີບ ແລະ ຕ້ອງຊໍາລະ ພາຍໃນເວລາ 30 ວັນ ນັບແຕ່ວັນສິ້ນສຸດການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ເປັນຕົ້ນໄປ;
3. ຄ່າຄຸ້ມຄອງປະຈໍາປີ ຈໍານວນ 10.000.000 ກີບ ຕໍ່ປີ ຕາມອາຍຸຂອງຮຸ້ນກູ້ ແລະ ຕ້ອງຊໍາລະພາຍໃນ ໄຕມາດ 1 ຂອງປີຖັດໄປ. ຍົກເວັ້ນ ບໍລິສັດອອກຈໍາໜ່າຍຮຸ້ນກູ້ ທີ່ອອກຈໍາໜ່າຍປີທໍາອິດ ແລະ ບໍລິສັດອອກຈໍາໜ່າຍຮຸ້ນກູ້ທີ່ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ.

**ມາດຕາ 19 (ປັບປຸງ) ຂັ້ນຕອນການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ພາຍຫຼັງໄດ້ຮັບໃບອະນຸຍາດໃຫ້ອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງປະຕິບັດຕາມຂັ້ນຕອນທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 19 ວັກທີໜຶ່ງ.

ຂັ້ນຕອນການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງໃຫ້ສໍາເລັດ ພາຍໃນເວລາ 90 ວັນ ນັບແຕ່ວັນໄດ້ຮັບໃບອະນຸຍາດໃຫ້ອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ເປັນຕົ້ນໄປ. ກໍລະນີ ການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຫາກບໍ່ສໍາເລັດຕາມກໍານົດເວລາດັ່ງກ່າວ ບໍລິສັດອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ສາມາດສະເໜີຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເພື່ອເພີ່ມເວລາຈໍາໜ່າຍຮຸ້ນກູ້ຕື່ມອີກກໍໄດ້ ແຕ່ບໍ່ໃຫ້

ເກີນ 30 ວັນ ແລະ ຕ້ອງສະເໜີຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຢ່າງໜ້ອຍ 3 ວັນ ລັດຖະການ ກ່ອນວັນສິ້ນສຸດກໍານົດເວລາດັ່ງກ່າວ.

**ມາດຕາ 20 ການປະກາດກ່ຽວກັບການອະນຸຍາດອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ພາຍຫຼັງໄດ້ຮັບໃບອະນຸຍາດອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ບໍລິສັດອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງປະກາດ ກ່ຽວກັບການໄດ້ຮັບອະນຸຍາດໃຫ້ອອກຈໍາໜ່າຍຮຸ້ນກູ້ດັ່ງກ່າວໃຫ້ແກ່ມວນຊົນ ເພື່ອຊາບ ໂດຍຜ່ານເວັບໄຊຂອງຕະຫຼາດຫຼັກຊັບ, ເວັບໄຊຂອງບໍລິສັດອອກຈໍາໜ່າຍຮຸ້ນກູ້ ແລະ ພາຫະນະສື່ມວນຊົນອື່ນຕາມຄວາມເໝາະສົມ ຢ່າງໜ້ອຍ 5 ວັນ ລັດຖະການ ຕໍ່ເນື່ອງ.

**ມາດຕາ 21 ການໂຄສະນາການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນຜ່ານພາຫະນະສື່ມວນຊົນ**

ບໍລິສັດອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງເປີດເຜີຍໜັງສືຊວນຊື້ຂອງຕົນ ໃຫ້ແກ່ມວນຊົນຜ່ານລະບົບເປີດເຜີຍຂໍ້ມູນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ດໍາເນີນການໂຄສະນາການອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນຜ່ານ ເວັບໄຊຂອງຕະຫຼາດຫຼັກຊັບ, ເວັບໄຊຂອງບໍລິສັດອອກຈໍາໜ່າຍຮຸ້ນກູ້ ແລະ ພາຫະນະສື່ມວນຊົນອື່ນຕາມຄວາມເໝາະສົມ ຢ່າງໜ້ອຍ 5 ວັນ ລັດຖະການ ຕໍ່ເນື່ອງ ກ່ອນການອອກຈໍາໜ່າຍ.

**ມາດຕາ 22 ການຈອງຊື້ຮຸ້ນກູ້ ແລະ ວາງເງິນມັດຈໍາ**

ການຈອງຊື້ຮຸ້ນກູ້ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນໜັງສືຊວນຊື້.

ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ຕ້ອງແຈກຢາຍໃບຈອງຊື້ຮຸ້ນກູ້ ໃຫ້ແກ່ຜູ້ລົງທຶນ ທີ່ສົນໃຈຊື້ຮຸ້ນກູ້ ພ້ອມດ້ວຍ ໜັງສືຊວນຊື້ ໃນຮູບແບບຂອງສໍາເນົາເອກະສານ ຫຼື ໃນຮູບແບບເອເລັກໂຕຣນິກ ຍົກເວັ້ນ ກໍລະນີທີ່ ຜູ້ລົງທຶນ ໄດ້ສະແດງເຈດຈໍານົງ ທີ່ຈະບໍ່ຮັບເອົາໜັງສືຊວນຊື້ດັ່ງກ່າວ.

ເວລາເປີດການຈອງຊື້ຮຸ້ນກູ້ ຜູ້ລົງທຶນ ຕ້ອງໂອນເງິນມັດຈໍາໃຫ້ຄົບຖ້ວນ ຕາມມູນຄ່າຮຸ້ນກູ້ທີ່ຕົນສັ່ງຈອງ ເຂົ້າໃນບັນຊີເງິນສະເພາະສໍາລັບການເປີດຈອງຊື້ຮຸ້ນກູ້ ຂອງຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ທີ່ເປີດຢູ່ໃນ ທະນາຄານທຸລະກິດໃດໜຶ່ງຢູ່ ສປປ ລາວ ພ້ອມທັງແຈ້ງຜົນ ກ່ຽວກັບການໂອນເງິນມັດຈໍາໃຫ້ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ຊາບ.

ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ຕ້ອງລາຍງານຜົນການຈອງຊື້ຮຸ້ນກູ້ປະຈໍາວັນ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເພື່ອຊາບ ພາຍໃນເວລາ 1 ວັນ ລັດຖະການ ຖັດມາ.

ໃນໄລຍະເວລາເປີດການຈອງຊື້ຮຸ້ນກູ້ ຜູ້ລົງທຶນໃດ ທີ່ໄດ້ຈອງຊື້ຮຸ້ນກູ້ ແລະ ວາງເງິນມັດຈໍາແລ້ວ ແມ່ນບໍ່ສາມາດຍົກເລີກການຈອງຊື້ຮຸ້ນກູ້ຂອງຕົນໄດ້ ຍົກເວັ້ນກໍລະນີ ໄດ້ຕົກລົງໄວ້ເປັນຢ່າງອື່ນ.

ກໍລະນີ ຂາຍບໍ່ໝົດ ພາຍໃນເວລາທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ອະນຸຍາດ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ສາມາດສະເໜີຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເພື່ອຂະຫຍາຍໄລຍະເວລາເປີດການຈອງຊື້ຮຸ້ນກູ້ ໄດ້ 1 ຄັ້ງ ແຕ່ບໍ່ໃຫ້ເກີນ 30 ວັນ.

ສໍາລັບ ຜູ້ຈອງຊື້ຮຸ້ນກູ້ທີ່ບໍ່ຍົກເລີກການຈອງຊື້ຮຸ້ນກູ້ຂອງຕົນ ໃນໄລຍະຂະຫຍາຍເວລາເປີດການຈອງຊື້ຮຸ້ນກູ້ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ຕ້ອງຮັບຜິດຊອບຈ່າຍດອກເບ້ຍໃຫ້ແກ່ ຜູ້ຈອງຊື້ຮຸ້ນກູ້ທີ່ບໍ່ຍົກເລີກການຈອງຊື້ຮຸ້ນກູ້ດັ່ງກ່າວ ຕາມອັດຕາດອກເບ້ຍເງິນຝາກປະຢັດຂອງ ທະນາຄານຕົວແທນເພື່ອການຊໍາລະ ຂອງ

ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ໃນໄລຍະນັ້ນ ນັບແຕ່ວັນທີ່ມີການຂະຫຍາຍໄລຍະເວລາເປີດການຈອງຊື້ຮຸ້ນກູ້ ເປັນຕົ້ນໄປ ຈົນກວ່າຈະສິ້ນສຸດໄລຍະເວລາເປີດການຈອງຊື້ຮຸ້ນກູ້.

**ມາດຕາ 23 ການຈັດສັນຮຸ້ນກູ້**

ພາຍຫຼັງຜູ້ລົງທຶນສຳເລັດການຈອງຊື້ຮຸ້ນກູ້ ແລະ ໂອນເງິນມັດຈຳ ເຂົ້າໃນບັນຊີເງິນສະເພາະສຳລັບການເປີດຈອງຊື້ຮຸ້ນກູ້ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງດຳເນີນການຈັດສັນຮຸ້ນກູ້ໃຫ້ຜູ້ລົງທຶນທີ່ໄດ້ຈອງຊື້ຮຸ້ນກູ້ ຕາມວິທີການທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້.

**ມາດຕາ 24 ການສົ່ງເງິນມັດຈຳຄືນ**

ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງສົ່ງເງິນມັດຈຳຄືນ ໃຫ້ແກ່ຜູ້ຈອງຊື້ຮຸ້ນກູ້ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ມີການຂະຫຍາຍໄລຍະເວລາເປີດການຈອງຊື້ຮຸ້ນກູ້;
2. ການບໍ່ໄດ້ຮັບການຈັດສັນຮຸ້ນກູ້ ຫຼື ໄດ້ຮັບການຈັດສັນຮຸ້ນກູ້ໜ້ອຍກວ່າຈຳນວນທີ່ໄດ້ຈອງຊື້;
3. ການຂາຍຮຸ້ນກູ້ບໍ່ສຳເລັດ ຕາມຈຳນວນທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ແລະ ມີມະຕິຂອງ ກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ຂອງບໍລິສັດອອກຈຳໜ່າຍຮຸ້ນກູ້ ບໍ່ຮັບຮອງເອົາຜົນຂອງການອອກຈຳໜ່າຍຮຸ້ນກູ້ດັ່ງກ່າວ;
4. ການໂຈະ ແລະ ການຍົກເລີກ ການອອກຈຳໜ່າຍຮຸ້ນກູ້.

ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງສົ່ງເງິນມັດຈຳຄືນໃຫ້ແກ່ຜູ້ຈອງຊື້ຮຸ້ນກູ້ ພາຍໃນເວລາ 5 ວັນລັດຖະການ ນັບແຕ່ວັນຂະຫຍາຍໄລຍະເວລາການເປີດການຈອງຊື້ຮຸ້ນກູ້, ວັນສິ້ນສຸດການອອກຈຳໜ່າຍຮຸ້ນກູ້, ວັນໄດ້ຮັບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້, ວັນສະເໜີຂອງຜູ້ຈອງຊື້ຮຸ້ນກູ້ ຫຼື ວັນອອກແຈ້ງການ ກ່ຽວກັບການໂຈະ ແລະ ຍົກເລີກການອອກຈຳໜ່າຍຮຸ້ນກູ້ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນ ວັກທີໜຶ່ງ ຂອງມາດຕານີ້.

ກໍລະນີ ຫາກກາຍກຳນົດເວລາໃນການສົ່ງເງິນມັດຈຳຄືນ ຕາມທີ່ໄດ້ກຳນົດໄວ້ໃນ ວັກທີສອງ ຂອງມາດຕານີ້ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງຮັບຜິດຊອບຈ່າຍດອກເບ້ຍໃຫ້ແກ່ ຜູ້ຈອງຊື້ຮຸ້ນກູ້ ຕາມອັດຕາດອກເບ້ຍເງິນຝາກປະຢັດຂອງ ທະນາຄານຕົວແທນເພື່ອການຊຳລະຂອງ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ໃນໄລຍະນັ້ນ ຈົນກວ່າຈະສົ່ງເງິນມັດຈຳຄືນໃຫ້ແກ່ ຜູ້ຈອງຊື້ຮຸ້ນກູ້ ຄົບຖ້ວນ.

**ມາດຕາ 25 ການອອກໃບຢັ້ງຢືນການຈັດສັນຮຸ້ນກູ້**

ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງອອກໃບຢັ້ງຢືນການຈັດສັນຮຸ້ນກູ້ ໃຫ້ແກ່ ຜູ້ຊື້ຮຸ້ນກູ້ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນສິ້ນສຸດການຈອງຊື້ຮຸ້ນກູ້ໃຫ້ແກ່ມວນຊົນ ເປັນຕົ້ນໄປ.

**ມາດຕາ 26 ການໂອນເງິນທີ່ລະດົມໄດ້**

ພາຍຫຼັງໄດ້ຮັບໃບຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນກູ້ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລ້ວ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນກູ້ ຕ້ອງໂອນເງິນທີ່ລະດົມໄດ້ຈາກ ບັນຊີເງິນສະເພາະສຳລັບການເປີດຈອງຊື້ຮຸ້ນກູ້ ເຂົ້າໃນ ບັນຊີເງິນສະເພາະສຳລັບທຶນທີ່ລະດົມໄດ້ຂອງບໍລິສັດອອກຈຳໜ່າຍຮຸ້ນກູ້ ທີ່ເປີດຢູ່ໃນ ທະນາຄານທຸລະກິດໃດໜຶ່ງຢູ່ ສປປ ລາວ.

**ມາດຕາ 27 (ປັບປຸງ) ການລາຍງານ ແລະ ການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ການລາຍງານ ແລະ ການຢັ້ງຢືນຜົນ ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 31.

ຜົນສຳເລັດຂອງການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ບໍ່ໄດ້ກຳນົດຈຳນວນຮຸ້ນກູ້ຂັ້ນຕ່ຳ ທີ່ຕ້ອງຂາຍໄດ້.

ກໍລະນີ ຂາຍບໍ່ໄດ້ຕາມຈຳນວນທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານຂອງບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງພິຈາລະນາ ຜົນຂອງການອອກຈຳໜ່າຍຮຸ້ນກູ້ດັ່ງກ່າວ. ຖ້າວ່າ ກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ຮັບຮອງເອົາ ຖືວ່າການອອກຈຳໜ່າຍຮຸ້ນກູ້ດັ່ງກ່າວສຳເລັດຜົນຕາມມູນຄ່າທີ່ຂາຍໄດ້ຕົວຈິງ. ກໍລະນີ ບໍ່ຮັບຮອງເອົາ ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງສົ່ງເງິນຄືນໃຫ້ແກ່ຜູ້ລົງທຶນ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນທີ່ມີມະຕິຮັບຮອງເປັນຕົ້ນໄປ.

**ມາດຕາ 28 (ປັບປຸງ) ການນຳໃຊ້ທຶນທີ່ລະດົມໄດ້**

ການນຳໃຊ້ທຶນທີ່ລະດົມໄດ້ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 32.

**ມາດຕາ 29 ການລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້, ການຊຳລະຕົ້ນທຶນ ແລະ ດອກເບ້ຍ**

ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງລາຍງານ ກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ຕາມແບບຟອມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍຜ່ານການຢັ້ງຢືນຈາກທີ່ປຶກສາດ້ານການເງິນ ພາຍໃນເວລາ 30 ວັນ ນັບແຕ່ວັນສິ້ນສຸດໄຕມາດ ເປັນຕົ້ນໄປ ແລະ ໃຫ້ສືບຕໍ່ລາຍງານ ຈົນກວ່າຈະນຳໃຊ້ທຶນດັ່ງກ່າວໝົດ.

ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງລາຍງານ ກ່ຽວກັບການຊຳລະ ຕົ້ນທຶນ ແລະ ດອກຂອງຮຸ້ນກູ້ດັ່ງກ່າວ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ຕາມແບບຟອມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 30 ວັນ ນັບແຕ່ວັນສິ້ນສຸດໄຕມາດ ເປັນຕົ້ນໄປ ແລະ ໃຫ້ສືບຕໍ່ລາຍງານຈົນກວ່າໄດ້ຊຳລະ ຕົ້ນທຶນ ແລະ ດອກເບ້ຍ ຄົບຖ້ວນ.

**ມາດຕາ 30 (ປັບປຸງ) ການສັ່ງໂຈະການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ການສັ່ງໂຈະການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 33. ນອກຈາກນັ້ນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດສັ່ງໂຈະການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ເປັນເວລາສູງສຸດ 60 ວັນ ໃນກໍລະນີ ການສະໜອງຂໍ້ມູນບໍ່ຖືກຕ້ອງ ຫຼື ບໍ່ປະຕິບັດຕາມຂັ້ນຕອນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 19 ວັກທີໜຶ່ງ.

ກໍລະນີ ຖືກສັ່ງໂຈະ ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງເປີດເຜີຍຂໍ້ມູນ ກ່ຽວກັບການຖືກສັ່ງໂຈະດັ່ງກ່າວໃຫ້ມວນຊົນຊາບ ຜ່ານເວັບໄຊຂອງຕະຫຼາດຫຼັກຊັບ, ເວັບໄຊຂອງບໍລິສັດອອກຈຳໜ່າຍຮຸ້ນກູ້ ແລະ ພາຫະນະສື່ມວນຊົນອື່ນຕາມຄວາມເໝາະສົມ ພາຍໃນເວລາ 5 ວັນ ລັດຖະການ ຕໍ່ເນື່ອງ ນັບແຕ່ວັນໄດ້ຮັບແຈ້ງການ ກ່ຽວກັບການໂຈະການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

ພາຍຫຼັງ ແກ້ໄຂສາເຫດຂອງການສັ່ງໂຈະໄດ້ແລ້ວ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງອອກແຈ້ງການຍົກເລີກການສັ່ງໂຈະດັ່ງກ່າວ ແລະ ອະນຸຍາດໃຫ້ສາມາດສືບຕໍ່ດຳເນີນການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕໍ່ໄປໄດ້ຕາມຈຳນວນວັນທີ່ຍັງເຫຼືອທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງເປີດເຜີຍຂໍ້ມູນ ກ່ຽວກັບການຍົກເລີກການສັ່ງໂຈະດັ່ງກ່າວໃຫ້ມວນຊົນຊາບ ຜ່ານເວັບໄຊຂອງຕະຫຼາດຫຼັກຊັບ, ເວັບໄຊຂອງບໍລິສັດອອກຈຳໜ່າຍຮຸ້ນກູ້ ແລະ ຜ່ານພາຫະນະສື່ມວນຊົນອື່ນຕາມຄວາມເໝາະສົມ ຢ່າງໜ້ອຍ 5 ວັນ ລັດຖະການຕໍ່ເນື່ອງ ນັບແຕ່ວັນໄດ້ຮັບແຈ້ງການ ກ່ຽວກັບການຍົກເລີກການສັ່ງໂຈະ ເປັນຕົ້ນໄປ.

**ມາດຕາ 31 (ປັບປຸງ) ການຍົກເລີກການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ການຍົກເລີກການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 33. ນອກຈາກນັ້ນ ຍັງຈະຖືກຍົກເລີກ ໃນກໍລະນີ ດັ່ງນີ້:

1. ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ບໍ່ສາມາດແກ້ໄຂສາເຫດທີ່ຖືກສັ່ງໂຈະໄດ້ ພາຍໃນເວລາ 60 ວັນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 30 ຂອງຂໍ້ຕົກລົງສະບັບນີ້;
2. ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ສະເໜີຍົກເລີກການອອກຈຳໜ່າຍຮຸ້ນກູ້ ຕາມມະຕິຂອງກອງປະຊຸມ ຜູ້ຖືຮຸ້ນ ຫຼື ສະພາບໍລິຫານ;
3. ຕາມຄຳສັ່ງ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດ;
4. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການ ກ່ຽວກັບການຍົກເລີກການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ບໍລິສັດອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕ້ອງເປີດເຜີຍຂໍ້ມູນ ກ່ຽວກັບການຍົກເລີກດັ່ງກ່າວໃຫ້ມວນຊົນຊາບ ຜ່ານເວັບໄຊຂອງຕະຫຼາດຫຼັກຊັບ, ເວັບໄຊຂອງບໍລິສັດອອກຈຳໜ່າຍຮຸ້ນກູ້ ແລະ ຜ່ານພາຫະນະສື່ມວນຊົນອື່ນຕາມຄວາມເໝາະສົມ ພາຍໃນເວລາ ຢ່າງໜ້ອຍ 5 ວັນ ລັດຖະການ ຕໍ່ເນື່ອງ.

## ໝວດທີ 4
## ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ

**ມາດຕາ 32 (ປັບປຸງ) ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ**

ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ແມ່ນ ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ ຜູ້ລົງທຶນປະເພດສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່ ທີ່ມີຈຳນວນລວມກັນແມ່ນ ບໍ່ເກີນ 10 ລາຍ. ກໍລະນີ ການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ໃຫ້ແກ່ ຜູ້ລົງທຶນປະເພດສະຖາບັນ ແມ່ນບໍ່ຈຳກັດຈຳນວນ ຜູ້ລົງທຶນປະເພດສະຖາບັນ ດັ່ງກ່າວ.

**ມາດຕາ 33 (ປັບປຸງ) ເງື່ອນໄຂການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 28. ນອກຈາກນັ້ນ ຍັງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ເປັນບໍລິສັດມະຫາຊົນ ຫຼື ບໍລິສັດຈຳກັດ ຍົກເວັ້ນ ບໍລິສັດຈຳກັດຜູ້ດຽວ;
2. ສ້າງຕັ້ງ ແລະ ເຄື່ອນໄຫວມາແລ້ວ ຢ່າງໜ້ອຍ 1 ປີ;

3. ມີເອກະສານລາຍງານການເງິນ 1 ປີ ຄືນຫຼັງ ນັບແຕ່ປີຍື່ນຄໍາຮ້ອງ ແລະ ເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກ ບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ

4. ມີແຜນການຊໍາລະ ຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນແຫຼ່ງທຶນສໍາລັບການ ຊໍາລະດັ່ງກ່າວ;

5. ສາມາດຊໍາລະ ຕົ້ນທຶນ ແລະ ດອກເບ້ຍ ຂອງຮຸ້ນກູ້ໃນບ້ວງທີ່ອອກຜ່ານມາ ຕາມກໍານົດເວລາໃນການຊໍາລະ ກໍລະນີ ທີ່ມີການອອກຈໍາໜ່າຍຮຸ້ນກູ້ເພີ່ມ;

6. ມີເງື່ອນໄຂອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 34 (ປັບປຸງ) ເອກະສານປະກອບການຮ້ອງຂໍອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ**

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ ຕ້ອງປະກອບເອກະສານຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 29. ນອກຈາກນັ້ນ ຍັງມີເອກະສານເພີ່ມເຕີມ ດັ່ງນີ້:

1. ສໍາເນົາໃບທະບຽນສໍາປະທານ ກໍລະນີ ເປັນທຸລະກິດສໍາປະທານ;
2. ບັນຊີລາຍຊື່ຜູ້ຖືຮຸ້ນ ແຕ່ ໜຶ່ງສ່ວນຮ້ອຍ (1%) ຂຶ້ນໄປ;
3. ໃບຢັ້ງຢືນຄວາມພ້ອມການອອກຈໍາໜ່າຍຮຸ້ນກູ້ຈາກ ທີ່ປຶກສາດ້ານການເງິນ (ຖ້າມີ);
4. ບົດລາຍງານການປະເມີນມູນຄ່າຊັບສິນ ໂດຍໄດ້ຮັບການຮັບຮອງຈາກ ຜູ້ປະເມີນມູນຄ່າຊັບສິນ ກໍລະນີ ການອອກຈໍາໜ່າຍຮຸ້ນກູ້ມີຫຼັກຊັບຄໍ້າປະກັນ.
5. ເອກະສານລາຍງານການເງິນ 1 ປີ ຄືນຫຼັງ ນັບແຕ່ປີຍື່ນຄໍາຮ້ອງ ແລະ ເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
6. ເອກະສານ ກ່ຽວກັບແຜນການຊໍາລະຕົ້ນທຶນ ແລະ ດອກເບ້ຍ ພ້ອມທັງສະແດງໃຫ້ເຫັນ ແຫຼ່ງທຶນສໍາລັບການຊໍາລະດັ່ງກ່າວ;
7. ໜັງສືຊວນຊື້ສະບັບຫຍໍ້ (Factsheet) ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
8. ເອກະສານກ່ຽວກັບການກໍານົດ ສິດ ແລະ ໜ້າທີ່ຂອງ ຜູ້ອອກຈໍາໜ່າຍຮຸ້ນກູ້ ແລະ ຜູ້ຖືຮຸ້ນກູ້;
9. ສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ ລະຫວ່າງ ບໍລິສັດອອກຈໍາໜ່າຍຮຸ້ນກູ້ ກັບ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນກູ້ (ຖ້າມີ);
10. ສັນຍາແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ (ຖ້າມີ);
11. ບົດລາຍງານການຈັດລໍາດັບຄວາມໜ້າເຊື່ອຖື (ຖ້າມີ);
12. ສັນຍາຄໍ້າປະກັນການຊໍາລະໜີ້ຈາກ ຜູ້ຄໍ້າປະກັນການຊໍາລະໜີ້ (ຖ້າມີ);
13. ເອກະສານອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ ຕ້ອງຮ່ວມກັບ ທີ່ປຶກສາດ້ານການເງິນ (ຖ້າມີ) ເປັນຜູ້ກະກຽມເອກະສານປະກອບການຂໍອອກຈໍາໜ່າຍຮຸ້ນກູ້ໃນວົງຈໍາກັດ ໃນແຕ່ລະຄັ້ງ ຊຶ່ງຕ້ອງຮັບຜິດຊອບຕໍ່ ເນື້ອໃນ ແລະ ຂໍ້ມູນ ທີ່ບົ່ງໄວ້ໃນເອກະສານດັ່ງກ່າວ ພ້ອມທັງເກັບຮັກສາເອກະສານປະຕິບັດງານທີ່ກ່ຽວຂ້ອງດັ່ງກ່າວໄວ້ ຢ່າງໜ້ອຍ 10 ປີ.

**ມາດຕາ 35 (ປັບປຸງ) ຄ່າບໍລິການການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຕ້ອງເສຍຄ່າບໍລິການ ໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີດັ່ງນີ້;

1. ຄ່າຍື່ນສຳນວນຄຳຮ້ອງຂໍອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຈຳນວນ 10.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຍື່ນສຳນວນຄຳຮ້ອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ຄ່າອອກໃບອະນຸຍາດການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ໃນແຕ່ລະຄັ້ງ ຈຳນວນ ສູນຈຸດສູນໜຶ່ງສ່ວນຮ້ອຍ (0,01%) ຂອງມູນຄ່າລວມຂອງຮຸ້ນກູ້ທີ່ອອກຈຳໜ່າຍ ແຕ່ບໍ່ໃຫ້ຕໍ່າກວ່າ 25.000.000 ກີບ ແລະ ຕ້ອງຊຳລະເງິນ ພາຍໃນເວລາ 30 ວັນ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ເປັນຕົ້ນໄປ;

3. ຄ່າຄຸ້ມຄອງປະຈຳປີ ຈຳນວນ 10.000.000 ກີບ ຕໍ່ປີ ຕາມອາຍຸຂອງຮຸ້ນກູ້ ແລະ ຕ້ອງຊຳລະເງິນພາຍໃນ ໄຕມາດ 1 ຂອງປີຖັດໄປ. ຍົກເວັ້ນ ບໍລິສັດອອກຈຳໜ່າຍຮຸ້ນກູ້ ທີ່ອອກຈຳໜ່າຍປີທຳອິດ ແລະ ບໍລິສັດອອກຈຳໜ່າຍຮຸ້ນກູ້ທີ່ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ.

**ມາດຕາ 36 (ປັບປຸງ) ຂັ້ນຕອນການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ**

ພາຍຫຼັງໄດ້ຮັບໃບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ແກ່ເປົ້າໝາຍຜູ້ລົງທຶນ ຕ້ອງປະຕິບັດຕາມຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້.

ບໍລິສັດອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ມີໜ້າທີ່ສ້າງກົນໄກໃນການ ຈອງຊື້ຮຸ້ນກູ້ ແລະ ວາງເງິນມັດຈຳ, ການຈັດສັນຮຸ້ນກູ້, ການສົ່ງເງິນມັດຈຳຄືນ, ການອອກໃບຢັ້ງຢືນການຈັດສັນຮຸ້ນກູ້.

**ມາດຕາ 37 ການນຳໃຊ້ບົດບັນຍັດຂອງການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ**

ນອກຈາກບົດບັນຍັດຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນໝວດນີ້ ການກະກຽມເອກະສານລາຍງານການເງິນ, ການພິຈາລະນາການຂໍອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ, ການລາຍງານ ແລະ ການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ແລະ ການນຳໃຊ້ທຶນທີ່ລະດົມໄດ້ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນບົດບັນຍັດຂອງ ການອອກຈຳໜ່າຍຮຸ້ນກູ້ໃຫ້ແກ່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນ ໝວດທີ 3 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 5
## ການຮັບຝາກ, ການຊື້ ຂາຍ ຮຸ້ນກູ້ ແລະ ຂໍ້ຫ້າມ

**ມາດຕາ 38 ການຮັບຝາກຮຸ້ນກູ້**

ບໍລິສັດອອກຈຳໜ່າຍຮຸ້ນກູ້ ຕ້ອງເອົາຮຸ້ນກູ້ໄປຝາກໄວ້ໃນສູນຮັບຝາກຫຼັກຊັບ ພາຍໃນເວລາ 5 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບໃບຢັ້ງຢືນຜົນການອອກຈຳໜ່າຍຮຸ້ນກູ້ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

**ມາດຕາ 39 ການຊື້ ຂາຍຮຸ້ນກູ້ໃນຕະຫຼາດຫຼັກຊັບ**

ຮຸ້ນກູ້ທີ່ອອກຈຳໜ່າຍ ໃຫ້ແກ່ມວນຊົນ ແລະ ໃນວົງຈຳກັດ ຕ້ອງຈົດທະບຽນໃນຕະຫຼາດຫຼັກຊັບ~~ລາວ~~ ແລະ ສາມາດຊື້ ຂາຍ ໂດຍປະຕິບັດຕາມ ເງື່ອນໄຂ ແລະ ຂັ້ນຕອນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະຂອງ ຕະຫຼາດຫຼັກຊັບ.

**ມາດຕາ 40 (ປັບປຸງ) ຂໍ້ຫ້າມ**

ຫ້າມບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນກູ້ ມີພຶດຕິກຳໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ອອກຈຳໜ່າຍຮຸ້ນກູ້ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ອອກຈຳໜ່າຍຮຸ້ນກູ້ ໂດຍການສະໜອງຂໍ້ມູນ ແລະ ເອກະສານ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງໃຫ້ແກ່ ສຳນັກງານຄະນະກຳມະການຄອງຫຼັກຊັບ;
3. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 41 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການຊຳລະໜີ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້, ຜູ້ປະເມີນມູນຄ່າຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການອອກຈຳໜ່າຍຮຸ້ນກູ້ຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 42 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການຊຳລະໜີ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້, ຜູ້ປະເມີນມູນຄ່າຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການອອກຈຳໜ່າຍຮຸ້ນກູ້ຢູ່ ສປປ ລາວ ທີ່ລະເມີດລະບຽບສະບັບນີ້ ຈະຖືກມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ມີການລາຍງານລ່າຊ້າ, ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;

3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 40 ຂອງຂໍ້ຕົກລົງສະບັບນີ້;

4. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງນີ້:

1. ການເປັນລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດຄວາມເສຍຫາຍເກີນ 1.000.000 ກີບ, ມີເຈດຕະນາໃນການລະເມີດ, ບໍ່ສະໝັກໃຈ ແຈ້ງ ຫຼື ລາຍງານການລະເມີດຂອງຕົນ, ບໍ່ໃຫ້ການຮ່ວມມືກ່ຽວກັບການລະເມີດຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ເປັນຄັ້ງທີ 2 ຈະຖືກປັບໃໝຈຳນວນ 2 ເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;

2. ອອກຈຳໜ່າຍຮຸ້ນກູ້ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ່ 2 ເທົ່າ ຂອງມູນຄ່າທີ່ລະດົມໄດ້;

3. ອອກຈຳໜ່າຍຮຸ້ນກູ້ ໂດຍການສະໜອງ ຂໍ້ມູນ ແລະ ເອກະສານ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງໃຫ້ແກ່ ສຳນັກງານຄະນະກຳມະການຄອງຫຼັກຊັບ ຈະຖືກປັບໃໝ 70.000.000 ກີບ ຫາ 100.000.000 ກີບ;

4. ລາຍງານລ່າຊ້າ, ລາຍງານບໍ່ຖືກຕ້ອງ ຕາມຄວາມເປັນຈິງ ຫຼື ບໍ່ລາຍງານ ກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້ ຈະຖືກປັບໃໝ ດັ່ງນີ້:

- ລາຍງານລ່າຊ້າ ຫຼາຍກວ່າ 5 ວັນ ຈະຖືກປັບໃໝ 1.000.000 ກີບ ຕໍ່ວັນ;
- ລາຍງານບໍ່ຖືກຕ້ອງ ຄັ້ງທຳອິດຈະແຈ້ງໃຫ້ປັບປຸງຄືນໃຫ້ຖືກຕ້ອງ ກໍລະນີບໍ່ປັບປຸງຄືນ ຈະຖືກປັບໃໝ 30.000.000 ກີບ;
- ບໍ່ລາຍງານ ຈະຖືກປັບໃໝ 50.000.000 ກີບ.

ມາດຕະການເພີ່ມເຕີມຕໍ່ ບໍລິສັດ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນ ໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຈະ ການອອກຈຳໜ່າຍຮຸ້ນກູ້;

3. ຍົກເລີກ ການອອກຈຳໜ່າຍຮຸ້ນກູ້;

4. ເຜີຍແຜ່ ກ່ຽວກັບການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 43 (ປັບປຸງ) ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້, ບໍລິສັດອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນກູ້, ຜູ້ຄ້ຳປະກັນການຊຳລະໜີ້, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້, ຜູ້ປະເມີນມູນຄ່າຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການອອກຈຳໜ່າຍຮຸ້ນກູ້ຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມຂອບເຂດ ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 44 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ ສະບັບເລກທີ 015/ຄຄຊ, ລົງວັນທີ 28 ມິຖຸນາ 2019.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ປະທານ

ສອນໄຊ ສິດພະໄຊ